# ຈົດໝາຍຂ່າວANRCB

ພຶດສະພາ 2022
ສະບັບ #2

**ສາລະບານ**

ການໃຊ້ທຶນໃນການຄົ້ນຄວ້າຂະໜາດນ້ອຍກ່ຽວກັບໂພຊະນາການ

—

ແຫຼ່ງຂໍ້ມູນໃໝ່ສໍາລັບການວັດແທກຮ່າງກາຍໃນໄວໆນີ້

–

ທົບທວນຄືນກ່ຽວກັບແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ




## ກອງປະຊຸມແຫ່ງຊາດດ້ານໂພຊະນາການ ຄັ້ງທີ VII

ໃນວັນທີ 16 ເດືອນ ກຸມພາ, ສປປ ລາວ ໄດ້ຈັດກອງປະຊຸມແຫ່ງຊາດດ້ານ ໂພຊະນາ ການຄັ້ງທີ 7 ຊຶ່ງມີບັນດາຜູ້ນໍາຈາກ ພາກລັດຖະບານທົ່ວປະເທດ ແລະ ບັນດາຄູ່ຮ່ວມ ພັດທະນາຫຼັກເຂົ້າຮ່ວມ ເພື່ອທົບທວນຄືນສິ່ງທ້າທາຍ ແລະ ໃຫ້ຄໍາໝັ້ນສັນຍາການຈັດ ຕັ້ງປະຕິບັດໃນອານາຄົດ. ກອງປະຊຸມດັ່ງກ່າວ, ໄດ້ຈັດຂຶ້ນໂດຍ ຄະນະກໍາມະການ ແຫ່ງຊາດ ດ້ານໂພຊະນາການ, ໂດຍການເປັນປະທານຂອງທ່ານຮອງນາຍົກ ລັດຖະມົນຕີ ແຫ່ງສສປ ລາວ ພະນະທ່ານ ປອ ກິແກ້ວ ໄຂຄໍາພິທູນ ແລະ ການເປັນ ປະທານຮ່ວມໂດຍ ທ່ານນາງ ອິນາ ມາຊິອຸຍຣີໂອນີເຕ ເອກອັກຄະລັດຖະທູດສະຫະ ພາບເອີຣົບ ປະຈໍາສປປ ລາວ, ແລະ ທ່ານນາງ ດຣ. ເພຍ ເຣເບລໂລ ບຣິດໂຕ, ຕາງໜ້າ ອົງການຢູນິເຊັບ ປະຈໍາສປປ ລາວ. ບັນດາຜູ້ນໍາຈາກ ກະຊວງສາທາລະນະສຸກ; ກະຊວງ ກະສິກໍາ  ແລະ ປ່າໄມ້,ກະຊວງສຶກສາ ທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ ເພື່ອທົບທວນຄືນຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ແລະ ກໍານົດທິດ ທາງແຜນການສໍາຄັນທີ່ເປັນບູລິມະສິດ ເພື່ອສຸມ ໃສ່ການຈັດຕັ້ງປະຕິບັດໃນຕໍ່ໜ້າ. ພ້ອມນີ້, ຍັງມີບັນດາຕົວແທນຈາກ ພາກທຸລະກິດ, ສູນກາງ ຊາວໜຸ່ມລາວ, ສະຫະພັນແມ່ຍິງລາວ ແລະ ອົງການຈັດຕັ້ງທາງສັງຄົມ ໄດ້ຮຽກຮ້ອງໃຫ້ມີການເພີ່ມການລົງທຶນໃສ່ການແກ້ໄຂບັນຫາການຂາດສານອາຫານ. ທ່ານດຣ. ບຸນຖົມ ຊາມຸນຕຣີ, ຜູ້ອໍານວຍການມະຫາວິທະຍາໄລວິທະຍາສາດສຸຂະພາ ໄດ້ກ່າວແຈ້ງຕໍ່ ທີ່ປະຊຸມວ່າ ທາງມະຫາວິທະຍາໄລກໍາລັງສ້າງຫຼັກສູດ ແລະ ປະລິນຍາໃໝ່ເພື່ອຕອບ ສະໜອງ ຄວາມຮຽກຮ້ອງຕ້ອງການທີ່ເພີ່ມຂຶ້ນ ຂອງຊ່ຽວຊານດ້ານ ໂພຊະນາການຢູ່ ສປປ ລາວ ພ້ອມທັງອະທິບາຍເຖິງ ຄວາມຈໍາເປັນໃນການລົງທຶນໃສ່ການສຶກສາ ຂັ້ນສູງສະເພາະດ້ານ ເພື່ອຮັບປະກັນຜົນສໍາເລັດ ຂອງແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ.

# ການໃຫ້ທຶນສຳລັບການຄົ້ນຄວ້າ

*ທຶນຂອງການຄົ້ນຄວ້າ ມູນຄ່າ 5000 ໂດລາສະຫະລັດ ເປັນການລິເລີ່ມໄລຍະຍາວຂອງໂຄງການແນະນຳ ເພື່ອສົ່ງເສີມການຄົ້ນຄວ້າທາງດ້ານໂພຊະນາການທີ່ມີຄຸນນະພາບ ໂດຍທີມງານຄົ້ນຄວ້າຂອງລາວ.*

ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ (ສສກ), ມະຫາມທະຍາໄລວິທະຍາສາດສຸຂະພາບ (ມວສ) ແລະ ນັກຄົ້ນຄວ້າ ຂອງສູນໂພຊະນາການ ໄດ້ສົ່ງຫົວຂໍ້ການຄົ້ນຄວ້າ 12 ຫົວຂໍ້ ທີ່ກ່ຽວຂ້ອງກັບບູລະມະສິດຫຼັກທາງ ດ້ານໂພຊະນາການ. ທີມງານຄົ້ນຄວ້າທີ່ໄດ້ຮັບລາງວັນ ໄດ້ຖືກຈັບຄູ່ກັບທີ່ປຶກສາຈາກ ມະຫາວິທະຍາໄລ ເພີດູ່ (Purdue) ແລະ ອິນເດຍນາ (Indiana) ຢູ່ສະຫາລັດອາເມລິກາ ເພື່ອສົ່ງເສີມການຮ່ວມມືຫຼາຍຂຶ້ນ ທາງດ້ານຄຸນນະພາບຂອງການ ຄົ້ນຄວ້າ ແລະ ເໝາະສົມກັບສະພາບການຂອງ ສປປ ລາວ. ການຄົ້ນຄວ້າແມ່ນ ກ່ຽວຂ້ອງກັບອາຫານ ແລະ ຄວາມຕ້ອງການຂອງເດັກ ອະນຸບານ, ໄວໜຸ່ມ ແລະ ແມ່ທີ່ກຳລັງລ້ຽງລູກດ້ວຍນົມໃນ ສປປ ລາວ.

| | ທີມງານຄົ້ນຄວ້າ | ຫົວຂໍ້ທີ່ສົນໃຈ |
|---|---|---|
| **ສູນ ໂພຊະນາການ** | ທ່ານ ສຸພະໄຊ ຄຳພັນທອງ<br>ທ່ານ ວິລະສິດ ມີຄ່າສິດ<br>ທ່ານ ໄມໂຄ ວົງໄຊ<br>ທ່ານ ພອນປະເສີດ ສຸດທະລັກ | ປັດໃຈທີ່ກ່ຽວຂ້ອງກັບປະສິດທິຜົນຂອງການລ້ຽງລູກດ້ວຍນ້ຳນົມແມ່, ການສົ່ງເສີມ ແລະ ການສະໜັບສະໜູນໃນໄລຍະການລະບາດຂອງພະຍາດໂຄວິດ-19 ຢູ່ແຂວງວຽງຈັນ. |
| **ມວສ** | ທ່ານ ສຸກສາໝອນ ທອງມີໄຊ<br>ທ່ານ ຈິນດາວຽງ ພົມມະວົງ<br>ທ່ານ ລັດສະໝີ ລາດຊະວົງ | ການໄດ້ຮັບສານອາຫານ ແລະ ໄດ້ຮັບພຽງພໍ ໃນເດັກອະນຸບານ ອາຍຸຕ່ຳກວ່າ 5 ປີ ຢູ່ແຂວງວຽງຈັນ |
| **ມວສ** | ທ່ານ ວຽງນະຄອນ ວົງໄຊທ່ານ<br>ທ່ານ ວິລາມົນ ຈັນທະລີໄຊ<br>ທ່ານ ພອນວິໄລ ສົມຕິສຸກ<br>ທ່ານ ໂຄກະເຊຍ ໜຶ່ງມຸ້ງຫວັງ | ການຂາດວິຕາມິນເອ ໃນເດັກກ່ອນໄວຮຽນ ຢູ່ແຂວງວຽງຈັນ: ການສຶກສາແບບປະສົມປະສານຢູ່ຂັ້ນຊຸມຊົນ |
| **ມວສ** | ທ່ານ ອາດສະໜາ ສົມເພັດ<br>ທ່ານ ອາດສະໜາ ທຳມະວົງສາ<br>ທ່ານ ອອນອານົງ ເສດຖາວັນໄຊ | ຄວາມຮູ້ທາງດ້ານອາຫານ ແລະ ການປະຕິບັດຂອງໄວໜຸ່ມຍິງ ຂັ້ນມັດທະຍົມສຶກສາຕອນປາຍ ທີ່ອາໄສຢູ່ໃນຕົວເມືອງ ແລະ ພໍ່ແມ່ຂອງເຂົາເຈົ້າ, ສປປ ລາວ |
| **ສສກ** | ທ່ານ ສົມພອນ ສຸກຫາວົງ<br>ທ່ານ ທົ່ງຄຳ ໄຊຍະວົງ<br>ທ່ານ ໄຫດາລັດ ພັນນະວົງ. | ການສຳຫຼວດ ການບໍລິໂພກອາຫານຂອງໄວໜຸ່ມ ອາຍຸ 10–19 ປີ ຢູ່ນະຄອນຫຼວງວຽງຈັນ ປີ 2022 |
| **ສສກ** | ທ່ານ ເກດມະນີ ລາດສະວົງ<br>ທ່ານ ບຸນໂຮມ ສຸກຂະພອນ<br>ທ່ານ ເນຍລຸນ ວົງປະເສີດ<br>ທ່ານ ມີໂກ ເພັງມາລາ<br>ທ່ານ ລັດຕິນ ພັນທະວົງ | ການກຳນົດອາຫານທີ່ມັກ ແລະ ຕິດພັນກັບການບໍລິໂພກເກືອ/ນ້ຳຕານ ແລະ ຄວາມສ່ຽງຕໍ່ການເປັນພະຍາດບໍ່ຕິດຕໍ່ ໃນໄວໜຸ່ມ ຢູ່ສປປ ລາວ |





# ແຫຼ່ງຂໍ້ມູນການວັດແທກຮ່າງກາຍ

**ຈະມີການສະໜອງ ແຫຼ່ງຂໍ້ມູນໃໝ່ໃນໄວໆນີ້ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມສອດຄ່ອງ ໃນການປະເມີນທາງດ້ານໂພຊະນາການ ແລະ ສະພາບການຈະເລີນເຕີບໂຕ ຢູ່ສປປ ລາວ.**

- ຫຼັກສູດການຝຶກອົບຮົມການວັດແທກຮ່າງກາຍ ຂອງສູນໂພຊະນາການ/ ANRCB ເປັນຊຸດການສອນທີ່ສົມບູນ (ປະກອບມີ ບົດນຳສະເໜີ, ການປະເມີນ ກ່ອນ ແລະ ຫຼັງການຝຶກອົບຮົມ, ຄູ່ມືສຳລັບຜູ້ອຳນວຍຄວາມສະດວກ, ແລະ ວິດີໂອ) ມີຈຸດປະສົງເພື່ອ ອະທິບາຍວິທີການ ແລະ ເຫດຜົນຂອງການປະເມີນ ທາງດ້ານໂພຊະນາການ ສຳລັບເດັກອ່ອນ, ເດັກນ້ອຍ ແລະ ຜູ້ໃຫຍ່. ຫຼັກສູດດັ່ງ ກ່າວ ເໝາະສົມສຳລັບການຝຶກອົບຮົມໃຫ້ນັກຄົ້ນຄວ້າ, ທ່ານໝໍ ແລະ ຜູ້ຈັດຕັ້ງ ປະຕິບັດ.

- ບັນດາວິດີໂອ ສະແດງໃຫ້ເຫັນ ການສາທິດດ້ານເຕັກນິກທີ່ ຖືກຕ້ອງ ເພື່ອປະເມີນນ້ຳໜັກ, ລວງສູງ, ການວັດແທກຮອບແຂນເບື້ອງເທິງ (MUAC), ແລະ ການວັດແທກຮອບຫົວ ແລະ ບັນດາວິດີໂອໄດ້ຖືກພັດທະນາຂຶ້ນ ເພື່ອໃຊ້ ໃນການຝຶກອົບຮົມ ຫຼື ໃຊ້ເປັນແຫຼ່ງຂໍ້ມູນ ເພື່ອການຮຽນຮູ້ດ້ວຍຕົນເອງ.

- ໃນໄວໆນີ້ ອົງການຢູນິເຊັບ ແລະ ໂຮງໝໍເພື່ອນລາວສຳລັບເດັກຈະໄດ້ ເຜີຍແຜ່ບັນດາວິດີໂອ ໃຫ້ແກ່ພະນັກງານແພດ ເພື່ອຈຳແນກ ແລະ ປິ່ນປົວການ ຂາດສານອາຫານກະທັນຫັນໃນເດັກອ່ອນ ແລະ ເດັກນ້ອຍ ຊຶ່ງມີຈຸດປະສົງເພື່ອ ສົ່ງເສີມການດູແລເດັກອ່ອນ ແລະ ເດັກນ້ອຍ ທີ່ຂາດສານອາຫານກະທັນຫັນ.

ບັນດາອົງການທີ່ມີແຜນ ກ່ຽວກັບການວັດແທກຮ່າງກາຍ ສາມາດຕິດຕໍ່ ສູນໂພຊະນາການ ເພື່ອຂໍເຊົ່າອຸປະກອນ ແລະ ຂໍການສະໜັບສະໜູນດ້ານວິຊາການ.

# ຂ່າວຈາກຜູ້ຈັດຕັ້ງປະຕິບັດ

*ທ່ານເຄີຍໄດ້ຍິນ ກ່ຽວກັບ SUN CSA ມາກ່ອນບໍ?*

ເຄືອຂ່າຍອົງການຈັດຕັ້ງທາງສັງຄົມເພື່ອສົ່ງເສີມໂພຊະນາການ (SUN CSA) ແມ່ນເຄືອຂ່າຍທີ່ເປັນທາງການ ຊຶ່ງມີຈຸດ ປະສົງ ເພື່ອປັບປຸງທາງດ້ານໂພຊະນາການ ແບບຍືນຍົງ ຢູ່ສປປ ລາວ, ໂດຍເນັ້ນໜັກໃສ່ ກຸ່ມແມ່ຍິງ ແລະ ເດັກນ້ອຍ ໃນຊ່ວງ 1,000 ວັນທຳອິດຂອງຊີວິດ. ເຄືອຂ່າຍນີ້ໄດ້ ປະສານງານຮ່ວມກັບ ບັນດາອົງການ ຈັດຕັ້ງທາງສັງຄົມ ໂດຍການສ້າງຂີດຄວາມສາມາດແລະ ເສີມສ້າງການຈັດຕັ້ງການ ປະຕິບັດທີ່ດີທີ່ສຸດ. ເຄືອຂ່າຍດັ່ງ ກ່າວນີ້ ໄດ້ສ້າງຂຶ້ນໃນ ປີ 2014 ແລະ ປັດຈຸບັນ ມີສະມາຊິກ 69 ທ່ານ ຊຶ່ງມາຈາກອົງການ INGOs 22 ທ່ານ, ອົງການ NPAs 39 ທ່ານ ແລະ ອີກ 8 ທ່ານ ມາຈາກເຄືອຂ່າຍ ຫຼື ພາກທຸລະກິດເພື່ອສັງຄົມ.

ເວັບໄຊສຂອງ SUN CSA ມີສອງພາສາ ຊຶ່ງມີລັກສະນະ ເປັນຫ້ອງສະມຸດທີ່ເຕັມໄປດ້ວຍຂໍ້ມູນທີ່ມີຄຸນຄ່າດ້ານ ໂພຊະນາການຫຼາຍທີ່ສຸດຢູ່ສປປ ລາວ, ລວມມີບົດ ຄົ້ນຄວ້າ, ນະໂຍບາຍ, ຊຸດຝຶກອົບຮົມ, ບົດສເຕີ, ແລະ ແຫຼ່ງຂໍ້ມູນຂ່າວສານອື່ນໆ.http://www.suncsalaos.org/

ການຮຽນຮູ້ໂດຍຫຍໍ້ No. 5 ກ່ຽວກັບໂຄງການສົ່ງເສີມ ໂພຊະນາການຂອງຄອບຄົວຊາວກະສິ ກອນ ເຂດເນີນສູງ (ENUFF Project) ຂອງອົງການ SNV Laos ຊຶ່ງມີລາຍ ລະອຽດກ່ຽວກັບຜົນກະທົບ ຂອງນະວັດຕະກຳດ້ານກະ ສິກຳ ເພື່ອໂພຊະນາການ. ການເຂົ້າເຖິງ ດ້ານກະສິກຳ ເພື່ອໂພຊະນາການ ແມ່ນເພື່ອການປັບປຸງຄວາມຫຼາກຫຼາຍ ດ້ານອາຫານ (2021) ໄດ້ທີ່:

https://suncsalaos.org/document/enuff-learning-brief-5/

**ປຶ້ມລາຍການຊະນິດພືດທີ່ມີສານອາຫານສູງ ຂອງສູນໂພຊະນາການ ແລະ ອົງການ WFP –** ປຶ້ມດັ່ງກ່າວ ສະໜອງຂໍ້ມູນທີ່ ຄຸນຄ່າ ດ້ານໂພຊະນາການ ແລະ ຂໍ້ມູນການ ປູກຝັງ ພືດສຳລັບ 34 ຊະນິດ ທີ່ມີຄວາມສຳຄັນຕໍ່ອາຫານ ຂອງລາວ, ຜະລິດໂດຍອົງການ WFP ແລະ ສູນໂພຊະນາການ.

https://issuu.com/.../lao_nutrient_dense_food_crop_book...

## ຈຸດສຸມຂອງການຄົ້ນຄວ້າ

**ການຄົ້ນຄວ້າໃໝ່ ເພື່ອຊອກຫາ ການພັດທະນາ ຜະລິດຕະພັນ RUTF ພາຍໃນທ້ອງຖິ່ນ ເພື່ອປັບປຸງການປິ່ນປົວ ການຂາດສານອາຫານກະທັນຫັນໃນເດັກນ້ອຍລາວ.**




**ຕິດຕໍ່ນັກຄົ້ນຄວ້າໄດ້ທີ່:**
**franck.wieringa@ird.fr**


# ການສຶກສາ ກ່ຽວກັບອາຫານບຳບັດ ໃນທ້ອງຖິ່ນກຳລັງດຳເນີນຢູ່

ອັດຕາຊຸກຊຸມຂອງການຂາດສານອາຫານກະທັນຫັນ ໃນເດັກອາຍຸຕ່ຳກວ່າ 5 ປີ ຢູ່ ສປປ ລາວ ຍັງຄົງຢູ່ໃນລະດັບສູງ ແລະ ໃນປະຈຸບັນມີທ່າແຮງຈະເພີ່ມ ຂຶ້ນຫຼາຍ ເນື່ອງຈາກບັນຫາ ຂາດການຄໍ້າປະກັນສະບຽງອາຫານເພີ່ມຂຶ້ນໃນ ໄລຍະການລະບາດຂອງພະຍາດໂຄວິດ-19. ເດັກນ້ອຍສ່ວນໃຫຍ່ສາມາດ ປິ່ນປົວຢູ່ເຮືອນ ດ້ວຍອາຫານເສີມທີ່ເອີ້ນວ່າ ອາຫານພ້ອມນຳໃຊ້ສຳລັບການ ປິ່ນປົວ (RUTF), ແລະ ຕົວຢ່າງຂອງອາຫານເສີມ ທີ່ຮູ້ຈັກກັນຢ່າງກ້ວາງ ຂວາງແມ່ນ  PlumpyNut, ຊຶ່ງແມ່ນອາຫານເສີມທີ່ເຮັດຈາກຖົ່ວດິນ. ຢູ່ລາວ ຍັງບໍ່ມີ RUTF ທີ່ເປັນຜະລິດຕະພັນຂອງທ້ອງຖິ່ນ ປະຈຸບັນນີ້ສິນຄ້າທັງໝົດ ແມ່ນສິນຄ້ານຳເຂົ້າມາ. ແຕ່ກ່ອນຈະເລີ່ມການຜະລິດ ທີ່ເປັນຜະລິດຕະພັນ ທ້ອງຖິ່ນ, ຈຳເປັນຕ້ອງມີຂໍ້ມູນຫຼາກຫຼາຍ ກ່ຽວກັບລົດຊາດທີ່ມັກ ສຳລັບ  RUTF ຢູ່ສປປ ລາວ. ດັ່ງນັ້ນ, ດ້ວຍການສະໜັບສະໜູນຈາກອົງການ ຢູນິເຊັບ, ສູນໂພຊະນາການ ແລະ ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ແລະ ສະຖາບັນຄົ້ນຄວ້າແຫ່ງຊາດຝຣັ່ງ ເພື່ອການພັດ ທະນາທີ່ຍືນຍົງ (IRD) ກຳລັງເຮັດການສຶກສາ ນຳຄູ່ແມ່ ແລະ ລູກຈຳນວນ 80 ຄູ່ ທີ່ຍິນຍອມເຂົ້າຮ່ວມການສຶກສາ ຢູ່ແຂວງຜົ້ງສາລີ ແລະ ອັດຕະປືໃນ ເດືອນມັງກອນຂອງປີນີ້. ໄດ້ມີການທົດລອງ RUTF ສີ່ປະເພດທີ່ແຕກ ຕ່າງກັນ ນຳກຸ່ມແມ່ ແລະ ເດັກທີ່ຍິນຍອມ ແລະ ໄດ້ເຮັດການປະເມີນຈາກ ການບໍລິໂພກເປັນເວລາ 3 ວັນ. ຊຶ່ງຜົນໄດ້ຮັບຈະໃຊ້ເປັນແນວທາງໃນການ ພັດທະນາ ແຜນງານການຄຸ້ມຄອງເດັກຂາດສານອາຫານກະທັນຫັນແບບ ເຊື້ອມສານ (IMAM) ຢູ່ສປປ ລາວ ລວມທັງເປັນການລິເລີ່ມ ການພັດທະນາ ຜະລິດຕະພັນອາຫານໃນທ້ອງຖິ່ນ ຊຶ່ງສາມາດນຳໃຊ້ເພື່ອຕໍ່ສູ້ກັບການຂາດ ສານອາຫານ.

## ການທົບທວນຄືນກ່ຽວກັບ ແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ (NPAN)


ທ່ານ ດຣ. Gerald Shively, ຮອງຄະນະບໍດີ ແລະ ອາຈານ ດ້ານເສດຖະສາດກະສິກຳ, ຈາກມະຫາວິທະຍາໄລ ເພີດູ (ສະຫາລັດອາເມລິກາ)


ແຜນປະຕິບັດງານແຫ່ງຊາດ ດ້ານໂພຊະນາການ (NPAN) ປີ 2016-2020 ໄດ້ຮັບການເຜີຍແຜ່ ໂດຍຄະນະກຳມະການແຫ່ງຊາດ ດ້ານໂພຊະນາການ ໃນເດືອນທັນວາ ປີ 2021 ແລະ ເປັນເອກະສານທີ່ລວບລວມ ຍຸດທະສາດຂອງລັດຖະບານສ ປ ປ ລາວ ສຳລັບການແກ້ໄຂບັນຫາສຳຄັນ ດ້ານການ ຂາດສານອາຫານ ຢູ່ສປປ ລາວ. NPAN ໄດ້ຖືກພັດທະນາຂຶ້ນຈາກຂໍ້ມູນທີ່ໄດ້ຈາກລັດຖະບານ ແລະ ຄູ່ຮ່ວມພັດທະນາ, ຊຶ່ງເປັນຂໍ້ມູນສະບັບປັບປຸງ ທີ່ເປັນປະໂຫຍດ ແລະ ສຳຄັນຕໍ່ແຜນປະຕິບັດງານປີ 2016-2020 ແລະ ປະກອບດ້ວຍແຫຼ່ງຂໍ້ມູນທີ່ສຳຄັນ ຈາກຄູ່ຮ່ວມງານພາກເອກະຊົນ ແລະ ລັດຖະບານທີ່ກ່ຽວຂ້ອງດ້ານໂພຊະນາການ. ດັ່ງນັ້ນ  ຜູ້ທີ່ຈັດຕັ້ງປະຕິບັດກິດຈະກຳ ກ່ຽວຂ້ອງກັບໂພຊະນາການ ມີຄວາມຈຳເປັນຕ້ອງໄດ້ອ່ານເພື່ອ ເຮັດໃຫ້ກິດຈະກຳຂອງເຂົາເຈົ້າສອດຄ່ອງກັບເປົ້າໝາຍ ແລະ ຍຸດທະສາດຂອງລັດຖະບານລາວ. ບັນດາມູມມອງທີ່ສຳຄັນຂອງ NPAN ໄດ້ແກ່ການ ໃຫ້ຄຳໝັ້ນສັນຍາທີ່ຊັດເຈນ ເພື່ອນຳໃຊ້ ວິທີການແບບມີສ່ວນຮ່ວມຂອງຫຼາຍຂະແໜງການສຳລັບໂພຊະນາການ, ກອບແນວຄວາມຄິດທີ່ໄດ້ຮັບການ ປັບປຸງ ແລະ ກອບໜ້າວຽກດ້ານຍຸດທະສາດທີ່ສອດຄອງກັບ 8 ຕົວຊີ້ວັດລະດັບສູງ ແລະ 13 ຈຸດປະສົງຍຸດທະສາດ  (SOs).  ອົງການ USAID ໄດ້ໃຫ້ ການສະໜັບສະໜູນ ໂຄງການສ້າງຄວາມເຂັ້ມແຂງ ໃນການຄົ້ນຄວ້າ ທາງດ້ານໂພຊະນາການ (ANRCB) ຊຶ່ງປະກອບສ່ວນເຂົ້າໃນຫຼາຍ SOs, ເຊັ່ນ SO6 (ການສ້າງຂີດຄວາມສາມາດໃຫ້ແກ່ສະຖາບັນ), SO7 (ການສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດ). SOs ເຫຼົ່ານີ້ ກ່ຽວຂ້ອງ ໂດຍກົງກັບອົງ ປະກອບ 3 ຂອງ NPAN, ຊຶ່ງຮຽກຮ້ອງໃຫ້ມີ “ການແກ້ໄຂ ສາເຫດພື້ນຖານ ຂອງການຂາດສານອາຫານ, ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ແລະ ສົ່ງເສີມການຈັດຕັ້ງປະຕິບັດແບບມີສ່ວນຮ່ວມຂອງຫຼາຍຂະແໜງການ” SOs ອື່ນໆ ຍັງຄົງຢູ່ພາຍໃຕ້ຂອບເຂດຂອງໂຄງການ ANRCB, ຊຶ່ງລວມມີ ການສົ່ງເສີມຄວາມສະເໝີພາບ ແລະ ການບໍ່ແບ່ງແຍກ, ໂດຍສະເພາະແມ່ນ ຄວາມສະເໝີພາບດ້ານບົດບາດ ຍິງ-ຊາຍ, ໃນທຸກດ້ານຂອງໂຄງການ.